**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ນະຄອນຫລວງວຽງຈັນ, ວັນທີ 19 ເມສາ 2018

ພະນະທ່ານ ອິນຮາມ ອາລີເຢບ,
ປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊັກໄບຊານ
ທີ່ ບາກູ

ພະນະທ່ານ,

ເນື່ອງໃນໂອກາດ ທີ່ພະນະທ່ານ ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊັກໄບຊານ ອີກວາລະໜຶ່ງ, ຕາງໜ້າປະຊາຊົນ ແຫ່ງ ສປປ ລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງພະນະທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ພະລານາໄມສົມບູນ ແລະ ສືບຕໍ່ປະສົບຜົນສຳເລັດອັນໃຫຍ່ຫລວງ ໃນການນຳພາປະເທດຊາດໄປສູ່ຄວາມວັດທະນາຖາວອນ.

ຂ້າພະເຈົ້າເຊື່ອໝັ້ນວ່າ ສາຍພົວພັນ ແລະ ການຮ່ວມມື ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ອາແຊັກໄບຊານ ຈະໄດ້ຮັບການຮັດແໜ້ນ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ ເພື່ອຜົນປະໂຫຍດຂອງສອງປະເທດພວກເຮົາ ກໍ່ຄື ເພື່ອສັນຕິພາບ ແລະ ການຮ່ວມມືສາກົນ ເພື່ອການພັດທະນາແບບຍືນຍົງ.

ດ້ວຍຄວາມນັບຖືຢ່າງສູງ,

ບຸນຍັງ ວໍລະຈິດ
ປະທານປະເທດ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Unofficial translation

Vientiane, 19 April 2018

H.E. Mr. Ilham ALIYEV,
President of the Republic of Azerbaijan

Baku

Your Excellency,

On the occasion of your re-election as President of the Republic of Azerbaijan, on behalf of the Lao People and on my own behalf, I would like to convey to Your Excellency my warm congratulations and best wishes for your good health, personal well-being and continued great success in leading your country towards prosperity.

I am convinced that the relations and cooperation between the Lao People's Democratic Republic and the Republic of Azerbaijan will be further developed and strengthened for the benefits of our two countries as well as for peace and international cooperation for sustainable development.

Please accept, Your Excellency, the assurances of my highest consideration.

Bounnhang VORACHITH,
President
of the Lao People's Democratic Republic